ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 46 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 18 ພະຈິກ 2016

ສຳນັກງານ ຄຄຊ
ຂາເຂົ້າ ເລກທີ...1139......
ວັນທີ..23 NOV 2016
ໂທລະສັບ 021 217770

## ລາຍງານການເຄື່ອນໄຫວປະຈຳອາທິດ
## ທີ 31/10/-04/11/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
## ຂອງທະນາຄານແຫ່ງ ສປປ ລາວ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາອ່ອນຄ່າລົງ 1,28% ທຽບເອີໂຣ ພາຍຫຼັງຄາດວ່າທະນາຄານກາງສະຫະລັດ (FED) ຈະປັບຂຶ້ນອັດຕາດອກເບ້ຍໃນທ້າຍປີນີ້ ບວກກັບກະຊວງແຮງງານຂອງສະຫະລັດ ເປີດເຜີຍຕົວເລກການຈ້າງງານຂອງສະຫະລັດ ໃນເດືອນ 08-09/2016 ເພີ່ມຂຶ້ນ 176.000 ຕຳແໜ່ງ ແລະ 191.000 ຕຳແໜ່ງ ຕາມລຳດັບ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 28/10/2016 | ອາທິດນີ້ 04/10/2016 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0901 | 1,1043 | -1,28% |
| ໂດລາ/ເຢນ | 104,40 | 103,86 | 0,51% |
| ໂດລາ/ບາດ | 35,032 | 34,990 | 0,12% |
| ໂດລາ/ເປໂຊ | 48,35 | 48,40 | -0,10% |
| ໂດລາ/ຣູເປັຍ | 13.023 | 13,055 | -0,25% |
| ໂດລາ/ໂດລາສິງກະໂປ | 1,3921 | 1,3878 | 0,30% |
| ໂດລາ/ປອນ | 6,7725 | 6,7646 | 0,12% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນຫຼຸດລົງ 8,27% ຈາກ 51,49 ໂດລາສະຫະລັດ ມາເປັນ 47,23 ໂດລາ/ບາເຣວ ພາຍຫຼັງປະເທດຊາອຸດີອະລະເບຍ ປະກາດຈະເພີ່ມກຳລັງການຜະລິດນ້ຳມັນ ເພີ່ມຂຶ້ນ ຈາກ 10,5 ລ້ານບາເຣວ/ວັນ ມາເປັນ 11-12 ລ້ານບາເຣວ/ວັນ, ບວກກັບມີຈຳນວນແທ່ງຂຸດເຈາະນ້ຳມັນເພີ່ມຂຶ້ນ 9 ແທ່ງ ເປັນ 450 ແທ່ງ ແລະ ປະລິມານນ້ຳມັນໃນຄັງຂອງສະຫະລັດ ເພີ່ມຂຶ້ນເປັນ 14,4 ລ້ານບາເຣວໃນອາທິດຜ່ານມາ.ສ່ວນລາຄາຄຳເພີ່ມຂຶ້ນ 1,71% ເປັນ 1.289 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າ 0,07% ສຳລັບອັດຕາ ທຫກ ແຂງຄ່າຂຶ້ນ 1,27% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າ 0,74% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,33% ສຳລັບອັດຕາຕະຫຼາດ. ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,12% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 2,69% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 2,71% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 5,55% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 28/09/2016 | | | ອາທິດນີ້ 04/11/2016 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.129,89 | 8.154,33 | 8.137,64 | 8.126,31 | 8.153,56 | 8.143,06 | 0,04% | 0,01% | -0,07% | -0,40% | 0,24% | 0,12% |
| ບາດ | 232,60 | 232,99 | 232,92 | 233,87 | 235,19 | 234,67 | -0,54% | -0,93% | -0,74% | -0,89% | -2,83% | -2,71% |
| ອັດຕາຕະຫຼາດ | | | | | | | | | | | | |
| ໂດລາ | 8.501,11 | 8.570,00 | 8.535,56 | 8.400,00 | 8.456,67 | 8.428,33 | 1,20% | 1,34% | 1,27% | -3,20% | -2,54% | -2,69% |
| ບາດ | 242,22 | 244,06 | 243,14 | 241,33 | 243,33 | 242,33 | 0,37% | 0,30% | 0,33% | - 3,74% | -5,72% | -5,55% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ຫຼຸດລົງ 2,70% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 5,46%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,26% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 13,01%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (31/10/-04/11/2016) ເຫັນວ່າ ທຫກ ຊື້ໂດລາສຸດທິ 19,27 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 43,81 ລ້ານໂດລາ ແລະ ຂາຍໂດລາໄດ້ 24,54 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 770,64 ລ້ານບາດ (ໃນນີ້ ຊື້ບາດໄດ້ 184,84 ລ້ານບາດ ແລະ ຂາຍບາດໄດ້ 955.48 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 24,61% ແລະ ຫຼຸດລົງ 39,10% ສຳລັບເງິນບາດ.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທຫກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 16,04 ລ້ານໂດລາ ແລະ ເງິນບາດ 72,00 ລ້ານບາດ;

---

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈຳນວນ 0,55 ລ້ານໂດລາສະຫະລັດ ແລະ ເງິນບາດ 7,00 ລ້ານບາດ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ພາຍໃນອາທິດແມ່ນຂາຍເງິນສະກຸນເງິນບາດ 0,10 ລ້ານ ບາດ ສ່ວນສະກຸນເງິນໂດລາສະຫະລັດແມ່ນບໍ່ມີການເຄື່ອນໄຫວ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 24-28/10/2016 | | ອາທິດທີ 31/10/-03/11/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. <u>ການຊື້ເງິນຕາຕ່າງປະເທດ</u> | **64,09** | **180,99** | **43,81** | **184,84** | **-31,64%** | **2,13%** |
| - ທ/ຄທຸລະກິດລັດ | 10,50 | 119,14 | 10,20 | 103,54 | -2,86% | -13,09% |
| - ທ/ຄທຸລະກິດອື່ນໆ | 53,59 | 61,85 | 33,61 | 81,30 | -37,28% | 31,45% |
| 2. <u>ການຂາຍເງິນຕາຕ່າງປະເທດ</u> | **26,58** | **1.691,43** | **24,54** | **955,48** | **-7,67%** | **-43,51%** |
| - ທ/ຄທຸລະກິດລັດ | 13,96 | 153.67 | 11,20 | 112,27 | -19,77% | -26,94% |
| - ທ/ຄທຸລະກິດອື່ນໆ | 12,62 | 1.537,76 | 13,34 | 843,21 | 5,71% | -45,17% |
| <u>ຊື້-ຂາຍສຸດທິ ທທກ</u> | **37,51** | **-1.510,44** | **19,27** | **-770,64** | **-48,63%** | **-48,98%** |
| - ຜິດດ່ຽງ ຊື້-ຂາຍ | 58,53% | -834,54% | 43,99% | -416,92% | -24,85% | -50,04% |
| - ມູນຄ່າການຊື້-ຂາຍ | **90,67** | **1,872,42** | **68,35** | **1,140,32** | **-24,62%** | **-39,10%** |
| 3. <u>ການຊື້ຂາຍລະຫວ່າງ ທຫລ ກັບ ທທກ</u> | **-11,15** | **-117,00** | **-16,04** | **-72,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 11,15 | 117,00 | 16,04 | 72,00 | | |
| 4. <u>ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ</u> | **2,89** | **64,51** | **0,55** | **7,00** | | |
| 5. <u>ທຫລ ກັບ ພາກສ່ວນ ອື່ນໆ</u> | **80,13** | **0,00** | **0,00** | **0,10** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

2.4 <u>ສະພາບອັດຕາເງິນເຟີ້</u>

ອັດຕາເງິນເຟີ້ ໃນເດືອນ 10/2016 ຄາດວ່າຈະຢູ່ໃນລະດັບ 1,90% ເພີ່ມຂຶ້ນຈາກ 1,84% ໃນເດືອນ 09/2016.

2.5 <u>ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ</u>

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 117,07ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 33,8% ເມື່ອທຽບໃສ່ອາທິດຜ່ານມາ.

III. <u>ວຽກງານວິຊາສະເພາະ</u>

1. <u>ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ</u>

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 928 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 223 ສະບັບ ເທົ່າກັບ 31,63% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 608,09 ຕື້ກີບ ເພີ່ມຂຶ້ນ 190,06 ຕື້ກີບ ເທົ່າກັບ 46,31% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (28/10/-03/11/2016) ມີຈຳນວນ 2.160 ຄັ້ງ ໂດຍມີມູນຄ່າ 662,53 ຕື້ກີບ ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 549 ຄັ້ງ;

ກະຊວງການເງິນ: ມີການບໍລິການ 39 ຄັ້ງ ມູນຄ່າ 141,26 ຕື້ກີບ.

2. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ (ຂໍ້ມູນດ້ານລຸ່ມນີ້ແມ່ນຂໍ້ມູນຂອງອາທິດທີ 24-28/10/2016).

ດັດຊະນີຕະຫຼາດຫຼັກຊັບລາວ ປິດຢູ່ທີ່ 987,73 ຈຸດ ຫຼຸດລົງ 1,17% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 104.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 506,46 ລ້ານກີບ ຫຼຸດລົງ 24,24% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 38,69% ຂອງມູນຄ່າການຊື້-ຂາຍທັງໝົດ;

| ຊື່ | ດັດຊະນີອາທິດທີ (17-21/10/2016) | ດັດຊະນີອາທິດທີ (24-28/10/2016) | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 998,73 | 9,87,73 | 1,17% | |

– ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX) (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ລາຄາສະເລ່ຍ(ກີບ) | ມູນຄ່າການຊື້-ຂາຍ (ກີບ) | ຈຳນວນ (ຮຸ້ນ) | ລາຄາສະເລ່ຍ(ກີບ) | ມູນຄ່າການຊື້-ຂາຍ (ກີບ) | ຈຳນວນ (ຮຸ້ນ) | ລາຄາສະເລ່ຍ(ກີບ) | ມູນຄ່າການຊື້-ຂາຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 13.600 | 4.990 | 67.865.000 | 16.000 | 4.870 | 77.920.000 | 17,65 | -120 | 14,82 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 123.900 | 4.859 | 602.025.000 | 86.300 | 4.892 | 422.155.000 | -30,35 | -33 | 29,88 |
| ບໍລິສັດລາວເວີນ ມະຫາຊົນ | 0 | 6.100 | 0 | 0 | 6.100 | 0 | - | - | - |
| ບໍລິສັດປີໂຕລັ້ງມເທລດ ດິ້ງລາວ ມະຫາຊົນ | 100 | 2.500 | 250.000 | 1.100 | 2.482 | 2.730.000 | 1.000 | -18 | -992 |
| ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | 0 | 3.100 | 0 | 1.200 | 3.050 | 3.660.000 | - | -50 | - |
| ທັງໝົດ | 137.600 | | 670.140.000 | 104.600 | | 506.465.000 | -23,98 | | 24,42 |

3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສຳເລັດການເປັນປະທານໂອ້ລົມໃນພິທີມອບບັດໃຫ້ສະມາຊິກພັກສົມບູນຊຸດທີ V;

- ສຳເລັດການເຂົ້າຮ່ວມ: ❶ ເປັນປະທານປຶກສາຫາລືກ່ຽວກັບການລົງຕິດຕາມກວດກາການກໍ່ສ້າງໜ່ວຍພັກເຂັ້ມແຂງ-ຮຸ້ນນຳພາຮອບດ້ານ ປະຈຳປີ 2016, ❷ ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ VIII ເພື່ອຊີ້ແຈງຕໍ່ຄຳຊັກຖາມຂອງສະມາຊິກສະພາແຫ່ງຊາດ, ❸ ຈັດກອງປະຊຸມເຜີຍແຜ່ ແລະ ຜັນຂະຫຍາຍເນື້ອໃນວຽກງານກວດກາທົ່ວປະເທດຄັ້ງທີ III, ❹ ກອງປະຊຸມປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດໂຄງການຜະລິດເຂົ້າ ແລະ ສົ່ງເສີມການປູກເຂົ້າເປັນສິນຄ້າຂອງ ບໍລິສັດປາວິນພັດທະນາກະສິກຳ ຢູ່ແຂວງຈຳປາສັກ;

- ສຳເລັດການຈັດກອງປະຊຸມເຜີຍແຜ່ວຽກງານ AML/CFT ໃຫ້ແກ່ບໍລິສັດໂອນເງິນດ່ວນ ບໍລິສັດເຊົ່າສິນເຊື່ອ;

- ສຳເລັດການເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບການເຄື່ອນໄຫວທຸລະກິດຂອງບໍລິສັດ PS ສົ່ງເສີມກະສິກຳ ແລະ ອຸດສາຫະກຳຄົບວົງຈອນ;

- ສຳເລັດການການວິເຄາະ STR ຈຳນວນ 13 ສະບັບ ແລະ ໄດ້ຮັບລາຍງານທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈາກທະນາຄານທຸລະກິດ 01 ສະບັບ, ຮອດປະຈຸບັນ STR ລົມທັງໝົດມີ 445 ສະບັບ.

4. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ❶ ຈັດກະກຽມກອງປະຊຸມພົບປະລະຫວ່າງຂະແໜງທະນາຄານ ແລະ ພາກທຸລະກິດ ກ່ຽວກັບການເຂົ້າຫາແຫຼ່ງທຶນ, ❷ ສໍາມະນາກ່ຽວກັບວຽກງານຊໍາລະສະສາງ, ❸ ຈັດກອງປະຊຸມກ່ຽວກັບການຜ່ານຮ່າງແຜນຍຸດທະສາດການເຂົ້າເຖິງແຫຼ່ງການບໍລິການດ້ານການເງິນສໍາລັບ ສປປ ລາວ ຮ່ວມກັບຜູ້ໃຫ້ທຶນ MAFIPP, ❹ ກອງປະຊຸມຄະນະຊີ້ນໍາລະດັບຊາດ ເພື່ອຂະບວນການໂຕະມົນ, ❺ ກອງປະຊຸມທາບທາມຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;

- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- ສືບຕໍ່ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ;

- ສືບຕໍ່ກະກຽມຄວາມພ້ອມກ່ຽວກັບການຈັດກອງປະຊຸມສອງຝ່າຍລະຫວ່າງ ທຫລ ແລະ ທະນາຄານກາງມຽນມ້າ ແລະ ກະກຽມເຂົ້າຮ່ວມກອງປະຊຸມ SEACEN;

- ກະກຽມສະເໜີຂັ້ນເທິງພິຈາລະນາ ເພື່ອສະເໜີເປີດກອງປະຊຸມສະພາບໍລິຫານ ພາຍຫຼັງທີ່ໄດ້ຮັບດໍາລັດຂອງທ່ານ ນາຍົກລັດຖະມົນຕີ ກ່ຽວກັບການແຕ່ງຕັ້ງ ສະພາບໍລິຫານ ທະນາຄານແຫ່ງ ສປປ ລາວ;

- ກະກຽມຄວາມພ້ອມໃນການເປັນເຈົ້າພາບຈັດກອງປະຊຸມທະວິພາຄີລະຫວ່າງ ທະນາຄານແຫ່ງ ສປປ ລາວ ກັບທະນາຄານກາງປະເທດເພື່ອນມິດເປັນຕົ້ນ ທະນາຄານກາງຫວຽດນາມ, ເກົາຫຼີ ແລະ ກໍາປູເຈຍ;

- ສືບຕໍ່ກະກຽມການເປັນປະທານຮ່ວມກອງປະຊຸມລະດັບຮອງລັດຖະມົນຕີກັບຮອງຜູ້ວ່າການ ທີ່ ປະເທດຍີ່ປຸ່ນ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ເພັດສະຖາພອນ ແກ້ວວົງວິຈິດ